ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຂໍ້ຫ້າມທີ່ ກົດໝາຍວ່າດ້ວຍ ທະນາຄານ ແຫ່ງ ສປປ ລາວ ໄດ້ກຳນົດ ແລະ ມາດຕະການຕໍ່ຜູ້ລະເມີດ

ຮຽນ ທ່ານຜູ້ອ່ານທີ່ນັບຖື ແລະ ຮັກແພງ! ຄືຮູ້ນຳກັນແລ້ວວ່າ ທະນາຄານແຫ່ງ ສ ລາວ ແມ່ນທະນາກາງຂອງປະເທດ, ມີພາລະບົດບາດໃນການເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກທາງດ້ານການເງິນໃຫ້ມີສະຖຽນລະພາບ ແລະ ເຄື່ອນໄຫວວຽກງານຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານວາງອອກ ຄື: ເຄື່ອນໄຫວວຽກງານດ້ານເງິນຕາແຫ່ງຊາດ, ດ້ານການປະຕິບັດນະໂຍບາຍເງິນຕາ ແລະ ດ້ານການຄຸ້ມຄອງສະຖາບັນການເງິນ ແລະ ລະບົບຊຳລະ. ຊຶ່ງວຽກງານດັ່ງກ່າວລ້ວນແລ້ວແຕ່ເປັນວຽກງານທີ່ສຳຄັນ ໃນການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ເພື່ອແນໃສ່ໃນການຮັບປະກັນສະຖຽນລະພາບທາງດ້ານເງິນຕາ, ຄວາມໝັ້ນຄົງຂອງສະຖາບັນການເງິນ ແລະ ລະບົບຊຳລະໃຫ້ມີຄວາມຄ່ອງຕົວ ໂດຍມີໂຄງປະກອບການຈັດຕັ້ງຢ່າງເປັນລະບົບຄົບຊຸດ ທີ່ປະກອບມີ: ສະພາບໍລິຫານ, ຄະນະກຳມະການ, ຄະນະຜູ້ວ່າການ ແລະ ກົງຈັກຊ່ວຍວຽກ ແລະ ພະນັກງານ ເຂົ້າໃນການປະຕິບັດວຽກງານ ຕາມຂອບເຂດສິດ ແລະ ໜ້າທີ່ ຕາມກົດໝາຍກຳນົດ. ສະນັ້ນ, ເພື່ອຮັບປະກັນຕໍ່ກັນຄວາມໜ້າເຊື່ອຖື, ດ້ານການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ແລະ ຈັນຍາບັນຂອງພະນັກງານທະນາຄານເອງ ຄັ້ງນີ້ຜູ້ຂຽນຈະມານຳສະເໜີກ່ຽວກັບຂໍ້ຫ້າມທີ່ກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດ ຕໍ່ກັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຂໍ້ຫ້າມສຳລັບທະນາ ຄານແຫ່ງ ສປປລາວ ແລະ ພະນັກງານຂອງ ທະນາຄານແຫ່ງ ສປປ ລາວເອງ ວ່າມີຄືແນວໃດແດ່ ແລະ ມາດຕະການຕໍ່ຜູ້ລະເມີດ ຕໍ່ກັບກົດໝາຍດັ່ງກ່າວ, ສະນັ້ນ. ມາເຂົ້າເນື້ອໃນກັນເລີຍ.

ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018 ໃນພາກທີ VI ວ່າດ້ວຍຂໍ້ຫ້າມ ເຊິ່ງໄດ້ກຳນົດຂໍ້ຫ້າມອອກເປັນສອງປະເພດ ຄື: ມາດຕາ 66 ຂໍ້ຫ້າມທົ່ວໄປ ແລະ ມາດຕາ 67 ຂໍ້ຫ້າມສຳລັບທະນາຄານແຫ່ງ ສປປ ລາວ ແລະ ພະນັກງານ ໂດຍເນື້ອໃນແຕ່ລະມາດຕາປະກອບມີ ດັ່ງນີ້:

+ ມາດຕາ 66 ຂໍ້ຫ້າມທົ່ວໄປ ແມ່ນ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:
  1. ລະດົມທຶນ ແລະ ດຳເນີນທຸລະກິດການເງິນ, ການທະນາຄານ ໂດຍບໍ່ໄດ້ຮັບອະນຸຍາດ;
  2. ເອົາຊື່ຂອງທະນາຄານແຫ່ງ ສປປ ລາວ ໄປນຳໃຊ້ເພື່ອຜົນປະໂຫຍດຂອງຕົນ;
  3. ຂັດຂວາງ, ປະຕິເສດການຮ່ວມມື ກັບເຈົ້າໜ້າທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານການເງິນ.

+ ມາດຕາ 67 ຂໍ້ຫ້າມສໍາລັບທະນາຄານແຫ່ງ ສປປ ລາວ ແລະ ພະນັກງານ ແມ່ນ ຫ້າມທະນາຄານແຫ່ງ ສປປ ລາວ ລົງທຶນສ້າງຕັ້ງວິສາຫະກິດໂດຍກົງ, ຮ່ວມທຶນ ຫຼື ຖືຮຸ້ນ ໃນວິສາຫະກິດໃດໜຶ່ງ ແລະ ຫ້າມພະນັກງານຂອງທະນາຄານແຫ່ງ ສປປ ລາວ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານ ໃນຫົວໜ່ວຍທຸລະກິດທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ເປີດເຜີຍຂໍ້ມູນ ທີ່ເປັນຄວາມລັບຂອງທະນາຄານແຫ່ງ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ໜ້າທີ່, ຕໍາແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ ແລະ/ຫຼື ໝູ່ຄະນະ;
4. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ແລະ ສໍ້ລາດບັງຫຼວງ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດຕາມກົດໝາຍ.

ນອກຈາກການກໍານົດຂໍ້ຫ້າມທີ່ໄດ້ກ່າວມານັ້ນແລ້ວ ກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ຍັງໄດ້ກໍານົດມາດຕະການຕໍ່ຜູ້ລະເມີດຕໍ່ກັບກົດໝາຍດັ່ງກ່າວ ໃນມາດຕາ 77 ໂດຍມີເນື້ອໃນດັ່ງນີ້:
+ ມາດຕາ 77 ມາດຕະການຕໍ່ຜູ້ລະເມີດ ໄດ້ກໍານົດວ່າ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍວ່າດ້ວຍທະນາຄານແຫ່ງສປປ ລາວ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

ນັ້ນແມ່ນຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ ທີ່ໄດ້ກໍານົດໃນກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ເພື່ອບັງຄັບໃຊ້ໃນສັງຄົມ, ເວົ້າລວມ, ເວົ້າສະເພາະ ກໍເພື່ອແນໃສ່ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ກະໂຕພະນັກງານຂອງທະນາຄານເອງ ໃຫ້ຮູ້ວ່າທຸກການກະທໍາຕາມຂໍ້ຫ້າມຕ່າງໆ ທີ່ໄດ້ກ່າວມານັ້ນ ລ້ວນແລ້ວແຕ່ເປັນການກະທໍາທີ່ຂັດຕໍ່ລະບຽບກົດໝາຍ ເຊິ່ງຜູ້ກະທໍາຕ້ອງໄດ້ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ.

ເພາະສະນັ້ນ, ບັນດາທ່ານຜູ້ອ່ານທີ່ນັບຖື ແລະ ຮັກແພງ, ເມື່ອທ່ານໄດ້ອ່ານບົດຄວາມນີ້ແລ້ວ ຖ້າຫາກພົບເຫັນປະກົດການໃດໆທີ່ມີການລະເມີດຕໍ່ຂໍ້ຫ້າມຂ້າງເທິງ ຈົ່ງພ້ອມກັນກ່າວເຕືອນຕໍ່ບຸກຄົນດັ່ງກ່າວເພື່ອໃຫ້ຢຸດຕິ ຫຼື ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບ.

#ໂດຍ: ວັນນະສິດ ສິດທິລາດວົງສາ,

ກົມນິຕິກໍາ, ທະນາຄານແຫ່ງ ສປປ ລາວ

## ຮັກບ້ານເກີດເມືອງນອນ ໃຊ້-ຈ່າຍ-ທອນ ເປັນເງິນກີບ